# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ເລກທີ 025/ ຂຕ.ອ

ລົງວັນທີ 12 ກຸມພາ 2015.

ສານປະຊາຊົນແຂວງ ສະຫວັນນະເຂດ

ຄະນະສານອາຍາ

ຂັ້ນຕົ້ນ

### ຄຳຕັດສິນ

ຄະນະສານອາຍາ ຂອງສານປະຊາຊົນແຂວງ ສະຫວັນນະເຂດ ປະກອບດ້ວຍ:

ທ່ານ ບຸນຫຼາຍ ອະເນກາ..............................................ປະທານ

ທ່ານ ສອນໄຊ ຮອຍສຳດາ............................................ຄະນະ

ທ່ານ ບຸນລໍ ລາສີໄຊ..................................................ຄະນະ

ພ້ອມດ້ວຍທ່ານ ວິໄລພອນ ນໍທີລາດ..................................ຈ່າສານ.

ຊ້ອງໜ້າທ່ານ ອຸ່ນຕາ ໄຊຍະປັນຍາ..............................ໜ້າອົງການໄອຍະການປະຊາຊົນ ແຂວງ ສະຫວັນນະເຂດ.

ໄດ້ເປີດປະຊຸມສານຂຶ້ນເມື່ອວັນທີ 12 ກຸມພາ 2015 ເວລາ 09 ໂມງ 30 ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງ ສານປະຊາຊົນແຂວງ ສະຫວັນນະເຂດ ເພື່ອພິຈາລະນາຄະດີອາຍາ ເລກທີ 014/ ຂຕ.ອ, ລົງວັນທີ 20 ມັງກອນ 2015.

### ລະຫວ່າງ:

- ທີ່ວໜ້າອົງການໄອຍະການປະຊາຊົນແຂວງ ສະຫວັນນະເຂດ..........................................ໂຈດ.

ທ້າວ ປຸງ + ນາງ ໄຂ່ (ລູກຂອງນາງ ຈັນສີ ຜູ້ເສຍຊີວິດ)..........................................ໂຈດທາງແພ່ງ.

ນາງ ໄກທອງ ຄູນໄພສານ ອາຍຸ 38 ປີ, ສັນຊາດ ລາວ, ເຊື້ອຊາດ ລາວ, ອາຊີບ ເຮັດນາ, ບ້ານ ວັດທະນະສົມບູນ, ເມືອງ ອາດສະພັງທອງ, ແຂວງ ສະຫວັນນະເຂດ..........................ຈຳເລີຍ1.

ທ້າວ ພູເພັດ ອາຍຸ 47 ປີ, ສັນຊາດ ລາວ, ເຊື້ອຊາດ ລາວ, ອາຊີບ ເຮັດນາ, ບ້ານ ດອນປ່າໄລ່, ເມືອງ ອາດສະພັງທອງ, ແຂວງ ສະຫວັນນະເຂດ..........................................................ຈຳເລີຍ2.

ທ້າວ ທັດສະດີ ອາຍຸ 44 ປີ, ສັນຊາດ ລາວ, ເຊື້ອຊາດ ລາວ, ອາຊີບ ເຮັດນາ, ບ້ານ ບຶງທະເລ, ເມືອງ ພະລານໄຊ, ແຂວງ ສະຫວັນນະເຂດ..........................................................ຈຳເລີຍ3.

ທ້າວ ມຸກ ອາຍຸ 51 ປີ, ສັນຊາດ ລາວ, ເຊື້ອຊາດ ລາວ, ອາຊີບ ເຮັດນາ, ບ້ານ ຫ້ວຍ, ເມືອງ ອາດສະພັງທອງ, ແຂວງ ສະຫວັນນະເຂດ..........................................................ຈຳເລີຍ4.

ທ້າວ ທ່ຽງ ອາຍຸ 61 ປີ, ສັນຊາດ ລາວ, ເຊື້ອຊາດ ລາວ, ອາຊີບ ເຮັດນາ, ບ້ານ ທ້ວຍ, ເມືອງ ອາດສະພັງທອງ, ແຂວງ ສະຫວັນນະເຂດ..........................................................................................ຈຳເລີຍ5.

- ຖືກຫາວ່າ: ການເປັນແພດເຖື່ອນ.
- ຖືກກັກຕົວ: ວັນທີ 24 ມິຖຸນາ 2014.
- ສະຖານທີ່ກັກຕົວ: ຄຸມຂັງຫຼັກ 06.

## ສານ

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ອີງຕາມ ສິດ ແລະ ໜ້າທີ່ຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນ.

ໄດ້ແຈ້ງຊື່ ແລະ ນາມສະກຸນ ຂອງຄະນະສານ, ຈ່າສານ, ຜູ່ຕາງໜ້າທີວໜ້າອົງການໄອຍະການປະຊາຊົນໃຫ້ ພວກຈຳເລີຍ ຊາບແລ້ວ.

ໄດ້ແຈ້ງສິດໃນການຄ້ານຕົວ ຄະນະສານ, ຈ່າສານ, ຜູ່ຕາງໜ້າທີວໜ້າອົງການໄອຍະການປະຊາຊົນໃຫ້ ພວກຈຳເລີຍ ຊາບແລ້ວ.

ໄດ້ແຈ້ງສິດໃນການຕໍ່ສູ້ຄະດີໃຫ້ໃຈດ, ພວກຈຳເລີຍ ຊາບແລ້ວ.

ໄດ້ຟັງຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການປະຊາຊົນແລ້ວ.

ໄດ້ຟັງຄຳໃຫ້ການຂອງ ພວກຈຳເລີຍ ໃນທີ່ປະຊຸມສານແລ້ວ.

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນແຂວງ ສະຫວັນນະເຂດ ແລ້ວ.

ໄດ້ຟັງຄຳໃຫ້ການເທື່ອສຸດທ້າຍຂອງ ພວກຈຳເລີຍ ແລ້ວ.

## ເນື້ອຄະດີ

ໃນຄັ້ງວັນທີ 19 ມິຖຸນາ 2014, ນາງ ຄອນ (ລູກສາວຂອງນາງ ຈັນສີ) ໄດ້ລົມກັບນາງ ວອນ, ຜູ່ເປັນນ້າສາວຂອງນາງ ຈັນສີ, ເລື່ອງຈະເອົາແມ່ (ນາງ ຈັນສີ) ທີ່ເຈັບໄຂໄປປິ່ນປົວນຳນາງ ໄກທອງ, ຈາກນັ້ນພວກກ່ຽວທັງສອງຈຶ່ງໄດ້ໂທລະສັບຫານາງ ໄກທອງ, ຈາກນັ້ນນາງ ໄກທອງ ຈຶ່ງໄດ້ຕອບວ່າ: ຍັງພາພີ່ນ້ອງໄປກວດພະຍາດຢູ່ຈັງຫວັດ ມຸກດາຫານ (ປະເທດໄທ), ເວລາຕໍ່ມາກໍ່ໄດ້ໂທລະສັບເລື່ອງການປິ່ນປົວອີກ, ແລ້ວນາງ ໄກທອງ ຈຶ່ງໄດ້ບອກວ່າ: ຄັນຊິເອົາມາປິ່ນປົວແທ້ກໍ່ໃຫ້ມາລໍຖ້າຢູ່ທີ່ເຮືອນ, ແຕ່ຕ້ອງໄດ້ລາອອກຈາກສາດສະໜາທີ່ເຄີຍຖືມາກ່ອນ, ນາງ ໄກທອງ ຈຶ່ງໄດ້ໂທລສັບໄປຫາທ້າວ ພູເພັດ ເພື່ອໄປຮັບເອົານາງ ຈັນສີ ພ້ອມດ້ວຍລູກຊື່ນາງ ໄຂ່, ຈາກນັ້ນທ້າວ ພູເພັດ ກັບທ້າວ ທ່ຽງ ກໍ່ໄດ້ເອົາລົດໄປຮັບເອົານາງ ຈັນສີ ມາທີ່ຖຽງນາຂອງທ້າວ ພູເພັດ, ຜູ່ກ່ຽວກໍ່ໄດ້ໂທລະສັບໄປຫາທ້າວ ທັດສະດີ, ທ້າວ ມຸກ, ເພື່ອມາທຳພິທີທາງ ສາດສາໜາ (ເຍຊູ) ໂດຍວິທີອະທິຖານ, ແຕ່ສະພາບອາການຂອງນາງ ຈັນສີ ກໍ່ຍັງບໍ່ດີຂຶ້ນ, ຕົກມາຮອດວັນທີ 21 ມິຖຸນາ 2014, ນາງ ໄກທອງ ຈຶ່ງໄດ້ເອົານາງ ຈັນສີ ໄປໂຮງໝໍ 109, ເມືອງ ອຸທຸມພອນ ເພື່ອປິ່ນປົວ, ຈາກນັ້ນນາງ ໄກທອງ, ນາງ ຈັນສີ ພ້ອມດ້ວຍລູກໄດ້ອອກຈາກໂຮງໝໍດັ່ງກ່າວ, ເພື່ອເມືອບ້ານ, ພໍມາຮອດບ້ານ ໂຄກ, ນາງ ຈັນສີ ກໍ່ໄດ້ເສຍຊີວິດ, ພາຍຫຼັງທີ່ນາງ ຈັນສີ ເສຍຊີວິດແລ້ວ, ພວກກ່ຽວກໍ່ໄດ້ທຳພິທີທາງສາດສະໜາ (ເຍຊູ) ພ້ອມຍາດພີ່ນ້ອງ, ຈາກນັ້ນພວກກ່ຽວຈະເອົາສາກຊົບຂອງນາງ ຈັນສີ ໄປຝັງຢູ່ຂອບເຂດດິນນາຂອງລູກ, ຫຼານຂອງນາງ ຈັນສີ, ແຕ່ລູກ, ຫຼານຄັດຄ້ານ, ອຳ

ນາດການປົກຄອງບ້ານກໍ່ໄດ້ເຊີນນາງ ໄກທອງ ມາສຶກສາອົບຮົມແນະນຳໃຫ້ໄປຝັງສົບບ່ອນອື່ນ, ຈາກນັ້ນຈຶ່ງໄດ້ມີຂໍ້ຂັດແຍ່ງ, ຕົກມາຮອດວັນທີ 24 ມິຖຸນາ 2014 ທາງເຈົ້າໜ້າທີ່ຈຶ່ງໄດ້ກັກຕົວມາທຳການສືບສວນ - ສອບສວນເພື່ອເບິ່ງຄວາມເປັນຈິງ, ສ່ວນສົບຂອງນາງ ຈັນສີ ອຳນາດການປົກຄອງບ້ານກໍ່ໄດ້ທຳພິທີຕາມຮີດຄອງປະເພນີ.

ຜ່ານການສອບສວນນາງ ໄກທອງ ໄດ້ໃຫ້ການຮັບສາລະພາບວ່າ:ໃນວັນທີ 19 ມິຖຸນາ 2014, ເວລາປະມານ 18 ໂມງໄດ້ມີນາງ ວອນ (ນ້ອງສາວນາງ ຈັນສີ) ໄດ້ໂທລະສັບມາເວົ້າວ່າ: ປ້າເອີຍ?, ເຈົ້າມາຮັບເອົາເອື້ອຍຂ້ອຍແນ່, ລາວເປັນເມື່ອຍແຮງ, ຜູ້ກ່ຽວຕອບວ່າ: ຂ້ອຍຍັງຢູ່ມຸກດາຫານ (ປະເທດໄທ) ເອົາພີ່ນ້ອງມາກວດພະຍາດ, ຄັນຢາກເອົາລາວໄປປິ່ນປົວແມ່ນອອກມາຖ້າຢູ່ເຮືອນຂ້ອຍພີ້ ແລະ ຕ້ອງໄດ້ລາຈາກຄວາມເຊື່ອຖືອັນເກົ່າ, ເຂົ້າຖືຮີດຄອງໃໝ່ນຳກັນເພື່ອໃຫ້ຜູ້ກ່ຽວດີຈາກການເຈັບໄຂ, ຈາກນັ້ນຜູ້ກ່ຽວກໍ່ໄດ້ໂທລະສັບໃຫ້ທ້າວ ພູເພັດ ໄປຮັບເອົານາງ ຈັນສີ ເພື່ອມາປິ່ນປົວດ້ວຍວິທີອະທິຖານຂໍພອນ, ມາຮອດວັນທີ 20 ມິຖຸນາ 2014, ເວລາ 22 ໂມງຜູ້ກ່ຽວຈຶ່ງມາຮອດເຮືອນຂອງທ້າວ ພູເພັດ ແລະ ກໍ່ໄດ້ຖາມອາການຂອງນາງ ຈັນສີ, ນາງ ຈັນສີ ຈຶ່ງໄດ້ຕອບວ່າ: ຍັງເມື່ອຍ, ກິນເຂົ້າບໍ່ແຊບ, ຜູ້ກ່ຽວຈຶ່ງໄດ້ເອົາຢາໄອລາໄຊນ ໃຫ້ກິນກໍ່ຍັງເມື່ອຍ, ຕົກມາຮອດເວລາ 01 ໂມງຂອງວັນທີ 21 ມິຖຸນາ 2014, ຈຶ່ງໄດ້ພານາງ ຈັນສີ ພ້ອມດ້ວຍຍາດພີ່ນ້ອງນຳສົ່ງໂຮງໝໍ 109, ເມືອງ ອຸທຸມພອນ,ຈາກນັ້ນທ່ານໝໍກໍ່ໄດ້ກວດເລືອດ ແລະ ໃສ່ອົກຊີ, ໃສ່ສະໂລນ, ນາງ ຈັນຈີ ຈຶ່ງໄດ້ພົ້ນຂຶ້ນມາໄດ້ແນ່, ຮອດເວລາ 08 ໂມງຂອງວັນດຽວກັນ, ນາງ ຈັນສີ ຢາກອອກຈາກໂຮງໝໍເພື່ອກັບບ້ານ, ທາງໂຮງໝໍກໍ່ອະນຸຍາດໃຫ້ເມືອ, ຈາກນັ້ນກໍ່ໄດ້ເອົາຂຶ້ນລົດເພື່ອສົ່ງພ້ອມພີ່ນ້ອງ, ພໍແລ່ນຮອດຂອບເຂດບ້ານ ກອຍໄຄກ, ນາງ ຈັນສີ ກໍ່ໄດ້ເສຍຊີວິດໃນລົດຂອງຜູ້ກ່ຽວ, ຈຶ່ງໄດ້ຕິດຕໍ່ຫາພີ່ນ້ອງຂອງນາງ ຈັນສີ, ເນື່ອງຈາກວ່າ: ບໍ່ກ້າເອົາສົບເຂົ້າໃນເຮືອນຂອງຜູ້ກ່ຽວ, ຢ້ານຜິດຮີດຄອງປະເພນີບ້ານ, ຈາກນັ້ນກໍ່ໄດ້ຕິດຕໍ່ພົວພັນອຳນາດການປົກຄອງບ້ານ, ເພື່ອປຶກສາຫາລືເລື່ອງສົບຂອງນາງ ຈັນສີ, ທາງອຳນາດການປົກຄອງບ້ານຈຶ່ງໄດ້ມອບສົບໃຫ້ນາງ ໄກທອງ ທຳພິທີທາງສາດສະໜາທີ່ຜູ້ກ່ຽວເຊື່ອຖື, ຍ້ອນວ່າ: ການປິ່ນປົວນາງ ຈັນສີ ແມ່ນບໍ່ໄດ້ແຈ້ງອຳນາດການປົກຄອງບ້ານ ແລະ ບໍ່ຮູ້ສາເຫດການເສຍຊີວິດ, ຈາກນັ້ນຜູ້ກ່ຽວພ້ອມພີ່ນ້ອງຈຶ່ງໄດ້ນຳສົບມາທຳພິທີຢູ່ເຮືອນຂອງນາງ ຈັນສີ, ແລະ ພ້ອມທັງລະດົມທຶນຈາກພີ່ນ້ອງເພື່ອຂຸດຂຸມຝັງສົບຢູ່ນາຂອງນາງ ສອນ (ນ້ອງສາວຂອງນາງ ຈັນສີ), ຈາກນັ້ນກໍ່ໄດ້ໄປຂຸດຂຸມຝັງສົບ, ແຕ່ນາງ ສອນ ໄດ້ອອກມາຫ້າມບໍ່ໃຫ້ຝັງສົບໃສ່ດິນນາ, ນາງ ສອນ ຈຶ່ງໄດ້ມາແຈ້ງຕໍ່ອຳນາດການປົກຄອງບ້ານ, ແລ້ວຈຶ່ງເກີດຂໍ້ຂັດແຍ່ງກັບຍາດພີ່ນ້ອງຂອງນາງ ຈັນສີ ຍ້ອນວ່າ: ຜູ້ຕາຍໄດ້ລາອອກຈາກຮີດຄອງເກົ່າ, ແລ້ວໄປຖືຮີດໃໝ່ຈຶ່ງຜິດກັນລະຫວ່າງອ້າຍນ້ອງນຳກັນ, ມາຮອດວັນທີ 24 ມິຖຸນາ 2014, ທາງເຈົ້າໜ້າທີ່ຕຳຫຼວດກຸ່ມຈຶ່ງກັກຕົວຜູ້ກ່ຽວກັບພວກຈຳນວນ 05 ຄົນທີ່ມີການພົວພັນຮ່ວມກັນເອົານາງ ຈັນສີ ໄປປິ່ນປົວ.

ຜ່ານການສອບສວນທ້າວ ພູເພັດ ໄດ້ໃຫ້ການຮັບສາລະພາບວ່າ: ໃນຄັ້ງວັນທີ 19 ມິຖຸນາ 2014, ເວລາ 09 ໂມງນາງ ໄກທອງ ໄດ້ໂທລະສັບມາບອກໃຫ້ໄປຮັບເອົານາງ ຈັນສີ ທີ່ເຈັບໄຂເພື່ອມາປິ່ນປົວຢູ່ເຮືອນຂອງນາງ ໄກທອງ, ຜູ້ກ່ຽວກັບທ້າວ ທ່ຽງ ຈຶ່ງໄດ້ເອົາລົດຮຸນໃດໄປຮັບເອົາພ້ອມດ້ວຍລູກສາວຂອງນາງ ຈັນສີ (ນາງ ຄອນ), ເມື່ອມາຮອດເຮືອນຜູ້ກ່ຽວແລ້ວ, ຜູ້ກ່ຽວຈຶ່ງປົວໂດຍການອະທິຖານຕາມຄວາມເຊື່ອຖື, ແຕ່ໄດ້ເອົາຢາໃຫ້ກິນຕາມສັງເກດເບິ່ງນາງ ຈັນສີ ກໍ່ຢູ່ໃນສະພາບອິດເມື່ອຍ, ການ

ອະທິຖານໂດຍມີພີ່ນ້ອງສະມາຊິກເຂົ້າຮ່ວມຄື: ທ້າວ ທ່ຽງ, ທ້າວ ມຸກ, ທ້າວ ແສງຫວ່າງ, ທ້າວ ສີປະເສີດ, ໄດ້ພາກັນອະທິຖານ, ມາຮອດວັນທີ 20 ມິຖຸນາ 2014, ເວລາປະມານ 07 ໂມງຜູ້ກ່ຽວພ້ອມພີ່ນ້ອງກໍ່ໄດ້ອະທິຖານປິ່ນປົວອີກ, ເພື່ອລໍຖ້ານາງ ໄກທອງ ມາແຕ່ ສະຫວັນນະເຂດ, ຈາກນັ້ນຜູ້ກ່ຽວພ້ອມດ້ວຍພີ່ນ້ອງອອກເດີນທາງໄປບ້ານ ເມືອງວັງ, ເມືອງ ວິລະບູລີ, ເພື່ອໄປທຳພິທີຕໍ່ຜູ້ເສຍຊີວິດ, ທີ່ເປັນສະມາຊິກໜຶ່ງຄົນ, ມາຮອດວັນທີ 21 ສິງຫາ 2014, ເວລາປະມານ 10 ໂມງນາງ ໄກທອງ ກໍ່ໄດ້ໂທລະສັບບອກວ່າ: ພີ່ນ້ອງເຮົານາງ ຈັນສີ ໄດ້ເສຍຊີວິດລາໂລກແລ້ວ, ຜູ້ກ່ຽວພ້ອມພີ່ນ້ອງສະມາຊິກຈຶ່ງກັບມາທຳພິທີທາງສາດສະໜາ ແລະ ເກັບເງິນກັນຊື້ໂລງສົບໃສ່ນາງ ຈັນສີ, ຢູ່ທີ່ນັ້ນໄດ້ 03 ວັນເກີດມີຂໍ້ຂັດແຍ່ງກັນ, ຫຼັງຈາກນັ້ນຈຶ່ງໄດ້ລໍຖ້າອຳນາດການປົກຄອງບ້ານມາຮັບສົບ, ເພື່ອຈັດພິທີທາງສາດສະໜາພຸດ, ຕໍ່ມາຈຶ່ງມີເຈົ້າໜ້າທີ່ມາກັກຕົວ.

ຜ່ານສອບສວນທ້າວ ທັດສະດີ ໄດ້ໃຫ້ການຮັບສາລະພາບວ່າ: ໃນຄັ້ງວັນທີ 21 ມິຖຸນ 2014 ເວລາປະມານ 17 ໂມງນາງ ໄກທອງ ໄດ້ບອກວ່າ: ໄດ້ມີພີ່ນ້ອງພວກເຮົາຊື່ນາງ ຈັນສີ ໄດ້ເສຍຊີວິດແລ້ວ, ແລະ ທາງຄອບຄົວ, ອຳນາດການປົກຄອງບ້ານເພິ່ນບໍ່ຮັບເອົາ, ໃຫ້ມາທຳພິທີທາງສາດສະໜາ, ໃຫ້ບອກພີ່ນ້ອງພາຍໃນບ້ານມາຮ່ວມພ້ອມ, ພາຍຫຼັງມາຮອດເຮືອນນາງ ຈັນສີ ບໍ່ທັນໄດ້ໃສ່ໂລງສົບ ແລະ ສັກຢາ ຟອກໂມນ, ກໍ່ໄດ້ເກັບເງິນກັບຍາດພີ່ນ້ອງສະມາຊິກ, ຈາກນັ້ນໄດ້ທຳພິທີທາງສາດສະໜາ, ມາຮອດວັນທີ 22 ມິຖຸນາ 2014, ເວລາປະມານ 09 ໂມງ 10 ນາທີ, ຜູ້ກ່ຽວກັບໝູ່ຫຼາຍຄົນໄດ້ໄປຂຸດຂຸມຢູ່ທີ່ດິນພີ່ນ້ອງຂອງນາງ ຈັນສີ, ເພື່ອເອົາສົບໄປຝັງ, ມາຮອດວັນທີ 23 ມິຖຸນາ 2014, ຜູ້ກ່ຽວພ້ອມພີ່ນ້ອງສະມາຊິກຈະມາເອົາສົບໄປຝັງໄວ້ ຕາມພິທີທາງສາດສະໜາ, ຈຶ່ງເກີດມີບັນຫາກັບຍາດພີ່ນ້ອງຂອງນາງ ຈັນສີ, ໂດຍຍາດພີ່ນ້ອງຂອງຜູ້ເສຍຊີວິດ ແລະ ອຳນາດການຍປົກຄອງກໍ່ບອກບໍ່ໃຫ້ຝັງສົບຢູ່ຂອບເຂດດິນນານີ້ເດັດຂາດ, ມາຮອດວັນທີ 24 ມິຖຸນາ 2014 ຜູ້ກ່ຽວກັບຍາດພີ່ນ້ອງສະມາຊິກໄດ້ປຶກສາກັນວ່າ: ຖ້າເຂົາບໍ່ພໍໃຈກໍ່ມອບໃຫ້ພວກເຂົາຄືນ, ໃຫ້ໄປເຮັດພິທີທາງສາດສະໜາຂອງເຂົາ, ຈາກນັ້ນກໍ່ມີເຈົ້າໜ້າທີ່ມາກັກຕົວໄວ້, ສ່ວນການປິ່ນປົວນາງ ຈັນສີ ຜູ້ກ່ຽວໃຫ້ການປະຕິເສດ, ແຕ່ຜ່ານມາຜູ້ກ່ຽວເຄີຍປິ່ນປົວຄົນມາຫຼາຍຄັ້ງ, ແຕ່ການປິ່ນປົວຕ້ອງລາອອກຈາກສາດສະໜາ, ມາຖືສາດສະໜານຳເຂົາຈຶ່ງສາມາດປິ່ນປົວໄດ້ ແລະ ທາງອຳນາດການປົກຄອງສຶກສາອົບຮົມມາແລ້ວ.

ຜ່ານສອບສວນທ້າວ ມຸກ ໄດ້ໃຫ້ການຮັບສາລະພາບວ່າ: ໃນຄັ້ງວັນທີ 19 ມິຖຸນາ 2014, ເວລາ 14 ໂມງ, ທ້າວ ພູເພັດ ໄດ້ໂທລະສັບບອກໃຫ້ມາເຮືອນ, ພໍມາຮອດເຮືອນທ້າວ ພູເພັດ ກໍ່ເຫັນຄົນຫຼາຍມາປິ່ນປົວຢູ່ເຮືອນທ້າວ ພູເພັດ ແລະ ເຫັນນາງ ຈັນສີ ພ້ອມລູກຫຼານ, ແລ້ວກໍ່ໄດ້ອະທິຖານທາງສາດສະໜາທີ່ພວກຕົນເຊື່ອຖື, ພໍຕື່ນເຊົ້າມາກໍ່ໄດ້ເຮັດພິທີທາງສາດສະໜາອີກເທື່ອໜຶ່ງໃຫ້ແກ່ນາງ ຈັນສີ, ແຕ່ເວລານັ້ນນາງ ໄກທອງ ໄດ້ເວົ້າວ່າ: ຊິເອົານາງ ຈັນສີ ໄປໂຮງໝໍ, ເພາະຜູ້ກ່ຽວມີການການເມື່ອຍ, ໃນວັນທີ 20 ມິຖຸນາ 2014, ພາຍຫຼັງເຮັດພິທີອະທິຖານທາງສາດສະໜາໃຫ້ນາງ ຈັນສີ, ຈຶ່ງພາກັນໄປເຮັດພິທີທາງສາດສະໜາໃຫ້ນາງ ນ້ອຍ (ຜູ້ເສຍຊີວິດ) ຢູ່ບ້ານ ເມືອງວັງ, ເມືອງ ວິລະບູລີ, ໄປກັບທ້າວ ພູເພັດ, ພ້ອມພີ່ນ້ອງ, ຈາກນັ້ນທ້າວ ພູເພັດ ໄດ້ເວົ້າວ່າ: ພີ່ນ້ອງພວກຫເຮົາໄດ້ລາໂລກແລ້ວ (ນາງ ຈັນສີ ເສຍຊີວິດ), ແລ້ວໄດ້ກັບມາເຮັດພິທີທາງສາດສະໜາ ແລະ ອອກເງິນກັນຊື້ໂລງສົບ ແລະ ພົວພັນກັບອຳນາດການປົກຄອງ, ຕໍ່ມາທາງອຳນາດການປົກຄອງບ້ານກໍ່ໄດ້ມອບສົບນາງ ຈັນສີ ຄືນເຮັດພິທີທາງສາດສະ

ຂາ, ຕາມທີ່ຜູ້ກ່າວເຊື່ອຖືຈຶ່ງເກີດມີຂໍ້ຂັດແຍ່ງກັບຍາດພີ່ນ້ອງຂອງນາງ ຈັນສີ (ບ່ອນຝັງສົບ), ຕົກມາຮອດວັນທີ 24 ມິຖຸນາ 2014, ໃນໄລຍະລໍຖ້າທາງເຈົ້າໜ້າທີ່ກໍ່ໄດ້ເຂົ້າມາກັກຕົວມາດຳເນີນຄະດີ.

ຜ່ານການສອບສວນທ້າວ ທຸ່ງ ໄດ້ໃຫ້ການຮັບສາລະພາບວ່າ: ໃນຄັ້ງວັນທີ 19 ມິຖຸນາ 2014, ເວລາປະມານ 19 ໂມງຜູ້ກ່າວກັບທ້າວ ພູເພັດ ໄດ້ຈັດພິທີສວດອະທິຖານຂໍພອນນຳພະເຈົ້າ, ໂດຍມີຫຼາຍຄົນສວດນຳກັນ (ປະມານ 10 ຄົນ), ມາຮອດວັນທີ 20 ມິຖຸນາ 2014, ເວລາປະມານ 07 ໂມງເຊົ້າຈຶ່ງໄດ້ອອກເດີນທາງໄປເມືອງ ວິລະບູລີ, ເພື່ອໄປທຳພິທີທາງສາດສະໜາໃຫ້ແກ່ຜູ້ທີ່ເສຍຊີວິດ, ຮອດວັນທີ 21 ມິຖຸນາ 2014, ເວລາປະມານ 09 ໂມງ 15 ນາທີຜູ້ກ່າວຈຶ່ງໄດ້ຮູ້ວ່າ: ນາງ ຈັນສີ ເສຍຊີວິດ, ຈາກນັ້ນຈຶ່ງໄດ້ກັບມາທຳພິທີທາງສາດສະໜາ, ເພາະວ່າທາງອຳນາດການປົກຄອງບ້ານໄດ້ມອບສົບໃຫ້ທຳພິທີດັ່ງກ່າວ, ຈາກນັ້ນໄດ້ປະມານ 02 ວັນຈຶ່ງໄດ້ໄປຂຸດຂຸມຝັງສົບນາງ ຈັນສີ ພ້ອມດ້ວຍພີ່ນ້ອງ, ຈາກນັ້ນຈຶ່ງໄດ້ເກີດມີຂໍ້ຂັດແຍ່ງເກີດຂຶ້ນ, ຈາກນັ້ນຈຶ່ງໄດ້ຖືກເຈົ້າໜ້າທີ່ຕຳຫຼວດກັກຕົວມາດຳເນີນຄະດີ.

## ວິນິດໄສ

ເມື່ອໄດ້ຄົ້ນຄວ້າພິຈາລະນາ ບັນດາເອກະສານຫຼັກຖານໆຕ່າງໆໃນສຳນວນຄະດີ ພ້ອມທັງຜົນຂອງການໄຕ່ສວນໃນທີ່ປະຊຸມສານ ຢ່າງລະອຽດຖີ່ຖ້ວນແລ້ວ.

ເຫັນວ່າ: ນາງ ໄກທອງ ຄູນໄພສານ (ຈຳເລີຍ1), ທ້າວ ພູເພັດ (ຈຳເລີຍ2), ທ້າວ ທັດສະດີ (ຈຳເລີຍ3), ທ້າວ ມຸກ (ຈຳເລີຍ4), ທ້າວ ທຸ່ງ (ຈຳເລີຍ5) ແມ່ນໄດ້ກະທຳຜິດຕາມຂໍ້ກ່າວຫາວ່າ: ການເປັນແພດເຖື່ອນ ຢ່າງແທ້ຈິງ, ເຊິ່ງມັນສະແດງອອກຄື: ໃນຄັ້ງວັນທີ 19 ມິຖຸນາ 2014, ໄດ້ມີນາງ ວອນ (ນ້ອງສາວຂອງນາງ ຈັນສີ) ໄດ້ໂທລະສັບມາຫານາງ ໄກທອງ ຄູນໄພສານ (ຈຳເລີຍ1) ຈຸດປະສົງແມ່ນເພື່ອຢາກພາເອື້ອຍມາປິ່ນປົວ, ຈາກນັ້ນນາງ ໄກທອງ (ຈຳເລີຍ1) ຈຶ່ງໄດ້ໂທລະສັບໄປຫາທ້າວ ພູເພັດ (ຈຳເລີຍ2) ເພື່ອໄປຮັບເອົານາງ ຈັນສີ ເພື່ອມາປິ່ນປົວ, ຈາກນັ້ນທ້າວ ພູເພັດ (ຈຳເລີຍ2) ຈຶ່ງໄດ້ໄປຊວນທ້າວ ທຸ່ງ (ຈຳເລີຍ5) ເພື່ອໄປຮັບເອົານາງ ຈັນສີ ເພື່ອມາປິ່ນປົວທາງສາດສະໜາ, ເມື່ອມາຮອດເຮືອນຂອງທ້າວ ພູເພັດ (ຈຳເລີຍ2) ກໍ່ໄດ້ປິ່ນປົວໂດຍການອະທິຖານຕາມຄວາມເຊື່ອຖື, ໂດຍມີພີ່ນ້ອງ ແລະ ສະມາຊິກເຂົ້າຮ່ວມນຳຄື: ທ້າວ ທຸ່ງ (ຈຳເລີຍ5), ທ້າວ ມຸກ (ຈຳເລີຍ4), ທ້າວ ແສງຫວ່າງ, ທ້າວ ສີປະເສີດ, ເຊິ່ງພວກຈຳເລີຍຕ່າງກໍ່ໄດ້ອ້າງວ່າ: . ທີ່ຜ່ານມາສາມາດປິ່ນປົວໄດ້ທຸກພະຍາດໃຫ້ຫາຍດີໂດຍບໍ່ຕ້ອງກິນຢາ, ຈາກນັ້ນພວກຈຳເລີຍຈຶ່ງໄດ້ສືບຕໍ່ປົວນາງ ຈັນສີ, ແຕ່ເຫັນວ່າ: ສະພາບຂອງນາງ ຈັນສີ ຍັງບໍ່ດີຂຶ້ນ ແລະ ຍັງອິດເມື່ອຍແຮງ, ໂດຍບໍ່ຖືກກັບຫຼັກວິທະຍາສາດທາງການແພດ ແລະ ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ຈຶ່ງໄດ້ນຳສົ່ງໂຮງໝໍ 109, ເມືອງ ອຸທຸມພອນ, ຈາກນັ້ນທ່ານໝໍກໍ່ໄດ້ໃຫ້ຢາ ແລະ ເຫັນວ່າອາການຂອງນາງ ຈັນສີ ກໍ່ດີຂຶ້ນ, ຈາກນັ້ນນາງ ໄກທອງ (ຈຳເລີຍ1) ຈຶ່ງໄດ້ເປັນຄົນໄປຂໍເອົານາງ ຈັນສີ ອອກຈາກໂຮງໝໍເພື່ອໄປທຳພິທີຕໍ່ຢູ່ທີ່ບ້ານ, ເມື່ອອອກຈາກໂຮງໝໍແລ້ວພວກຈຳເລີຍກໍ່ໄດ້ພານາງ ຈັນສີ ກັບເມືອບ້ານ, ແຕ່ໃນໄລຍະເດີນທາງກັບບ້ານນາງ ຈັນສີ ຈຶ່ງໄດ້ເສຍຊີວິດກ່ອນ, ແລະທີ່ຜ່ານມາທາງອຳນາດການປົກຄອງບ້ານໄດ້ກ່າວເຕືອນ ແລະ ສຶກສາອົບຮົມນາງ ໄກທອງ (ຈຳເລີຍ1), ທ້າວ ພູເພັດ (ຈຳເລີຍ2), ທ້າວ ທັດສະດີ (ຈຳເລີຍ3), ທ້າວ ມຸກ (ຈຳເລີຍ4), ທ້າວ ທຸ່ງ (ຈຳເລີຍ5), ຕາມບົດລາຍງານ ສະບັບລົງວັນທີ 25 ພຶດສະພາ 2014, 26, 28 ສິງຫາ 2014 ແລະ ເຫັນໄດ້ຕາມຄຳໃຫ້ການຮັບສາລະພາບ ຂອງພວກຈຳເລີຍ ສະບັບລົງວັນທີ 24, 26, 30 ມິຖຸນາ 2014, 01, 05, 09,

21 ກໍລະກົດ 2014, 28 ສິງຫາ 2014, 22, 27 ຕຸລາ 2014, 20 ພະຈິກ 2014 ແລະ ຄຳໃຫ້ການຂອງພວກຈຳເລີຍໃນທີ່ປະຊຸມສານ, ການກະທຳດັ່ງກ່າວຂອງພວກຈຳເລີຍ, ເມື່ອສານໄດ້ພິຈາລະນາແລ້ວເປັນການກະທຳຜິດໃນສະຖານ ການເປັນແພດເຖື່ອນ ເຊິ່ງຜິດຕໍ່ມາດຕາ 82 ວັກ 2 ຂອງກົດໝາຍອາຍາ ສະບັບປັບປຸງປີ 2005 ຊຶ່ງໄດ້ກຳນົດໄວ້ວ່າ: ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຄົນເສຍອົງຄະ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 500.000 ກີບ ຫາ 5.000.000 ກີບ, ຕໍ່ກັບການກະທຳດັ່ງກ່າວຂອງພວກຈຳເລີຍແລ້ວ, ດັ່ງນັ້ນສານຈຶ່ງເຫັນຄວນລົງໂທດຕັດອິດສະລະພາບນາງ ໄກທອງ ຄູນໄພສານ (ຈຳເລີຍ1), ທ້າວ ພູເພັດ (ຈຳເລີຍ2), ທ້າວ ທັດສະດີ (ຈຳເລີຍ3), ທ້າວ ມຸກ (ຈຳເລີຍ4), ທ້າວ ທ່ຽງ (ຈຳເລີຍ5) ກຳນົດ ຜູ້ລະ ເກົ້າເດືອນ ແລະ ປັບໃໝ ຜູ້ລະ 500.000 ກີບ.

ເຫັນວ່າ: ທ້າວ ປຸງ ແລະ ນາງ ໄຂ່ (ລູກຂອງນາງຈັນຜູ້ເສຍຊີວິດ) ໄດ້ຮຽກຮ້ອງຄ່າຊົດເຊີຍການເສຍຊີວິດຂອງແມ່ເປັນເງິນຈຳນວນ 100.000.000 ກີບ, ຈາກພວກຈຳເລີຍທັງຫ້າຄົນ, ເຊິ່ງເຫັນໄດ້ຕາມໃບສະເໜີ ສະບັບລົງວັນທີ 24 ມິຖຸນາ 201, ທີ່ຍື່ນຕໍ່ສານປະຊາຊົນແຂວງ ສະຫວັນນະເຂດ, ຕໍ່ມາໃນວັນທີ 26 ມັງກອນ 2015, ໄດ້ມີນາງ ຄອນ ແລະ ທ້າວ ທາ (ລູກຂອງນາງ ຈັນລີ) ໄດ້ຍື່ນຄຳຮ້ອງມາຫາສານຕາມເລກທີຂາເຂົ້າ, ເລກທີ 03/ສປຊ.ສຂ, ລົງວັນທີ 26 ມັງກອນ 2015 ຊຶ່ງມີຈຸດປະສົງບໍ່ກ່າວຫາ ແລະ ບໍ່ຟ້ອງຜູ້ຖືກຫາທັງຫ້າຄົນ, ກ່ຽວກັບການເສຍຊີວິດຂອງແມ່ພວກຂ້າພະເຈົ້າບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະຜ່ານມາ, ແມ່ນຜູ້ຖືກກ່າວຫາທັງຫ້າຄົນນີ້ພວກເພິ່ນມີຈຸດປະສົງຢາກຊ່ວຍເຫຼືອພວກຂ້າພະເຈົ້າຕາມຄຳຮ້ອງຂໍຂອງພວກຂ້າພະເຈົ້າ, ແຕ່ເມື່ອແມ່ຂອງຂ້າພະເຈົ້າທີ່ນອນປິ່ນປົວຢູ່ໂຮງໝໍ ແລະ ທຳໃຈໄວ້ແລ້ວໃນການສັ່ງລາຂອງເພິ່ນ, ຢາກເມືອຕາຍຢູ່ເຮືອນ, ສ່ວນການຊ່ວຍເຫຼືອຂອງປ້າ ໄກທອງ (ຈຳເລີຍ1) ເພິ່ນກໍ່ໄດ້ສຸມຈິດໃຈເອົາໃຈໃສ່ຊ່ວຍເຫຼືອສຸດຄວາມສາມາດແລ້ວ, ໃນການຊ່ວຍເຫຼືອທາງດ້ານການເງິນປິ່ນປົວ ແລະ ພາຫະນະພາໄປພາມາ, ຫຼັງຈາກນັ້ນແມ່ຂອງຂ້າພະເຈົ້າກໍ່ໄດ້ເສຍຊີວິດ, ໃນຕອນກຳລັງເດີນທາງກັບເມືອບ້ານ, ເມື່ອເມືອຮອດບ້ານແລ້ວປ້າ ໄກທອງ (ຈຳເລີຍ1) ກໍ່ໄດ້ຊ່ວຍເຫຼືອຈັດງານສົບຈັດພິທີທາງສາດສະໜາຕາມປະເພນີ, ຕໍ່ກັບບັນຫານີ້ການໄກ່ເກ່ຍຢູ່ທີ່ປະຊຸມສານແລ້ວເຫັນວ່າທັງສອງຝ່າຍບໍ່ສາມາດຕົກລົງກັນໄດ້, ສານຈຶ່ງເຫັນຄວນໃຫ້ພວກຈຳເລີຍເສຍເງິນຄ່າປົວແປງຈິດໃຈຈຳນວນ 15.000.000 ກີບ,ແລະຄ່າທຳບຸນສົມກິນທານຈຳນວນ 5.000.000 ກີບລວມເປັນ 20.000.000 ກີບໃຫ້ແກ່ຄອບຄົວນາງ ຈັນສີ(ຜູ້ເສຍຊີວິດ) .

ເຫັນວ່າ: ນາງ ໄກທອງ, ທ້າວ ພູເພັດ, ທ້າວ ທັດສະດີ, ທ້າວ ມຸກ, ທ້າວ ທ່ຽງ (ພວກຈຳເລີຍ) ແມ່ນໄດ້ເປັນຜູ້ກະທຳຜິດຕໍ່ກົດໝາຍອາຍາຢ່າງແທ້ຈິງ, ດັ່ງນັ້ນໂດຍອີງຕາມມາດຕາ 21, 30, 32 ແລະ 33 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006, ຈຶ່ງເຫັນຄວນໃຫ້ພວກຈຳເລີຍຮັບຜິດຊອບເສຍເງິນຄ່າທຳນຽມສານຄືນໃຫ້ແກ່ລັດຄື: ຄ່າເສື້ອປົກສຳນວນຄະດີ ຈຳນວນ 35.000 ກີບ, ຄ່າສິ່ງໝາຍຮຽກ, ໝາຍເຊີນ 60.000 ກີບ, ຄ່າຄຳຕັດສິນໜ້າລະ 2.000 ກີບ, ຄຳຕັດສິນມີເຈັດໜ້າ, ສິບສະບັບ ຈຳນວນ 98.000 ກີບ, ລວມເປັນເງິນທັງໝົດ ຈຳນວນ 193.000 ກີບ, ໂດຍແບ່ງກັນຮັບຜິດຊອບຜູ້ລະ 38.600 ກີບຄືນໃຫ້ແກ່ລັດ.

ເຫັນຕາມ ມາດຕາ 2, 5, 28 ແລະ 25 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2009.

ເຫັນຕາມ ມາດຕາ 82 ວັກ 2 ຂອງກົດໝາຍອາຍາ ສະບັບ ປັບປຸງປີ 2005.

ເຫັນຕາມ ມາດຕາ 164, 192, 204, 206, 207, 208, ແລະ 214, ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ປີ 2012.

ເຫັນຕາມ ມາດຕາ 21, 30, 32 ແລະ 33 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006.

## ດ້ວຍເຫດນີ້

ຄະນະສານອາຍາ ຂອງສານປະຊາຊົນແຂວງ ສະຫັວນນະເຂດ ຈຶ່ງໄດ້ຕັດສິນຄະດີຕໍ່ໜ້າປະຊາຊົນໃນສະຖານອາຍາເປັນຂັ້ນຕົ້ນໂດຍຊ້ອງໜ້າ ໂຈດ ແລະ ພວກຈຳເລີຍ.

ບອກວ່າ: ນາງ ໄກທອງ ຄູນໄພສານ (ຈຳເລີຍ1), ທ້າວ ພູເພັດ (ຈຳເລີຍ2), ທ້າວ ທັດສະດີ (ຈຳເລີຍ3), ທ້າວ ມຸກ (ຈຳເລີຍ4), ທ້າວ ທຸ່ງ (ຈຳເລີຍ5) ມີຄວາມຜິດໃນສະຖານ ການເປັນແພດເຖື່ອນ.

ລົງໂທດຕັດອິດສະລະພາບ (ພວກຈຳເລີຍ) ກຳນົດ ຜູ້ລະ ເກົ້າເດືອນ ແລະ ປັບໃໝ ຜູ້ລະ 500.000 ກີບ.

-ໃຫ້ພວກຈຳເລີຍເສຍເງິນຄ່າປົວແປງຈິດໃຈຈຳນວນ 15.000.000 ກີບ ແລະ ຄ່າທຳບຸນສົນກິນທານຈຳນວນ 5.000.000 ກີບ, ລວມເປັນເງິນຈຳນວນ 20.000.000 ກີບ ໃຫ້ແກ່ຄອບຄົວນາງຈັນສີ ( ຜູ່ເສຍຊີວິດ )

- ໃຫ້ນາງ ໄກທອງ, ທ້າວ ພູເພັດ, ທ້າວ.ທັດສະດີ, ທ້າວ ມຸກ, ທ້າວ ທຸ່ງ (ພວກຈຳເລີຍ) ເສຍເງິນຄ່າທຳນຽມສານຈຳນວນ 193.000 ກີບໂດຍແບ່ງກັນຮັບຜິດຊອບຜູ່ລະ 38.600 ກີບຄືນໃຫ້ແກ່ລັດ.

ໄດ້ບອກໂຈດ, ໂຈດທາງແພ່ງ ແລະ ພວກຈຳເລີຍຊາບແລ້ວ, ຖ້າຝ່າຍໃດບໍ່ພໍໃຈຕໍ່ກັບຄຳຕັດສິນສະ ບັບນີ້ມີສິດຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານໄດ້ພາຍໃນກຳນົດ ຊາວວັນ ນັບແຕ່ມື້ປະກາດຄຳຕັດສິນເປັນຕົ້ນໄປ.

**ປະທານຄະນະສານ** **ຈ່າສານ**

ບຸນຫຼາຍ ຂະເນກາ ວິໄລພອນ ບໍທິລາ